ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ກະຊວງການເງິນ
ຫ້ອງການ

ເລກທີ: 0615 /ຫກ
ນະຄອນຫຼວງວຽງຈັນ, ວັນທີ: 04 ມັງກອນ 2024

# ແຈ້ງການ

ເຖິງ: - ທົ່ວໜ້າກົມພາສີ;
- ທົ່ວໜ້າກົມເຕັກໂນໂລຊີຂໍ້ມູນຂ່າວສານການເງິນ;
- ທົ່ວໜ້າຄັງເງິນແຫ່ງຊາດ;
- ທົ່ວໜ້າພາສີປະຈຳແຂວງ, ນະຄອນຫຼວງວຽງຈັນ;
- ທົ່ວໜ້າດ່ານພາສີສາກົນ, ຫ້ອງການພາສີປະຈຳລະບົບສາງ, ເຂດເສດຖະກິດສະເພາະ ແລະ ເຂດເສດຖະກິດພິເສດ ໃນຂອບເຂດທົ່ວປະເທດ ແລະ ທຸກພາກສ່ວນທີ່ກ່ຽວຂ້ອງ.

ເລື່ອງ: ການຈັດຕັ້ງປະຕິບັດນຳໃຊ້ລະບົບ ການແຈ້ງພາສີແບບເອເລັກໂຕຣນິກ NSWA+ ການນຳໃຊ້ລາຍເຊັນເອເລັກໂຕຣນິກ ແລະ ການຊຳລະສະສາງຜ່ານ Finlink.

- ອີງຕາມ ຂໍ້ຕົກລົງຂອງລັດຖະມົນຕີກະຊວງການເງິນ ວ່າດ້ວຍການຈັດຕັ້ງ ແລະ ການເຄື່ອນໄຫວຂອງຫ້ອງການ ສະບັບເລກທີ 6118/ກງ, ລົງວັນທີ 10 ທັນວາ 2021;
- ອີງຕາມຂໍ້ຕົກລົງຂອງກະຊວງການເງິນ ສະບັບເລກທີ 3009/ກງ, ລົງວັນທີ 27 ກັນຍາ 2022 ວ່າດ້ວຍການນຳໃຊ້ ລະບົບເອເລັກໂຕຣນິກ NSWA+ ເຂົ້າໃນຄຸ້ມຄອງການແຈ້ງພາສີ;
- ອີງຕາມ ຄຳແນະນຳຂອງລັດຖະມົນຕີ ກະຊວງການເງິນ ກ່ຽວກັບການແຈ້ງພາສີດ້ວຍລະບົບ NSWA$^+$ ສະບັບເລກທີ 3011/ກງ, ລົງວັນທີ 27 ຕຸລາ 2022;
- ອີງຕາມ ຂໍ້ຕົກລົງຂອງກົມພາສີ ສະບັບເລກທີ 2434/ກພສ, ລົງວັນທີ 09 ສິງຫາ 2023 ວ່າດ້ວຍ ແຜນການຜັນຂະຫຍາຍ ແລະ ຝຶກນຳໃຊ້ລະບົບ NSWA$^+$ ຂອງກົມພາສີຢູ່ດ່ານພາສີສາກົນເປົ້າໝາຍໃນຂອບເຂດທົ່ວປະເທດ.

ເພື່ອຮັບປະກັນໃຫ້ການນຳໃຊ້ລະບົບການແຈ້ງພາສີແບບເອເລັກໂຕຣນິກ NSWA$^+$ ຢູ່ດ່ານພາສີສາກົນ, ຫ້ອງການພາສີປະຈຳລະບົບສາງ ເຂດເສດຖະກິດສະເພາະ ແລະ ເຂດເສດຖະກິດພິເສດ ໃນຂອບເຂດທົ່ວປະເທດ ເພື່ອສອດຄ່ອງກັບລະບຽບການ ແລະ ນຳໃຊ້ລະບົບດັ່ງກ່າວໄດ້ຢ່າງມີປະສິດທິພາບ, ຄ່ອງຕົວ ແລະ ເປັນເອກະພາບກັນໃນການຈັດຕັ້ງປະຕິບັດ.

**ຫ້ອງການ ອອກແຈ້ງການ ດັ່ງນີ້ :**

1. ຜູ້ປະກອບການທີ່ໄດ້ດຳເນີນກິດຈະການເປັນຜູ້ແຈ້ງພາສີທົ່ວໄປ ແລະ ຜູ້ບໍລິການແຈ້ງພາສີທີ່ມີຈຸດປະສົງໃນການນຳເຂົ້າ-ສົ່ງອອກ ຜ່ານດ່ານພາສີສາກົນ, ຫ້ອງການ ພາສີປະຈຳລະບົບສາງ ເຂດເສດຖະກິດສະເພາະ ແລະ ເຂດເສດຖະກິດພິເສດ ໃນຂອບເຂດທົ່ວປະເທດ ແມ່ນໃຫ້ນຳໃຊ້ລະບົບການແຈ້ງພາສີແບບເອເລັກໂຕຣນິກ NSWA$^+$ ໂດຍຈະດຳເນີນການ

ປະກອບເອກສານໃບແຈ້ງພາສີເປັນລາຍລະອຽດຜ່ານລະບົບ ແລະ ແນບເອກະສານປະກອບເຂົ້າລະບົບທັງໝົດ ເລີ່ມແຕ່ **ວັນທີ 04 ມີນາ 2024** ເປັນຕົ້ນໄປ;

2. ຂັ້ນຕອນ ແລະ ວິທີການ ໃນການປະກອບໃບແຈ້ງພາສີເປັນລາຍລະອຽດ ເຂົ້າໃນລະບົບການແຈ້ງພາສີເອເລັກໂຕຣນິກ NSWA⁺ ແມ່ນໃຫ້ປະຕິບັດຕາມຄຳແນະນຳຂອງກະຊວງການເງິນ ສະບັບເລກທີ 3011/ກງ, ລົງວັນທີ 27 ກັນຍາ 2022 ວ່າດ້ວຍການແຈ້ງພາສີດ້ວຍລະບົບເອເລັກໂຕຣນິກ NSWA⁺;
   - ສຳລັບ ຂັ້ນຕອນການກວດປ່ອຍສິນຄ້າ : ແມ່ນໃຫ້ດຳເນີນການນຳໃຊ້ ໃບບັນທຶກກວດປ່ອຍ ໃນການບັນທຶກການກວດກາສິນຄ້າ ແລະ ບັນທຶກລົງລະບົບ ASYCUDA/NSWA⁺.
3. ຂັ້ນຕອນ ແລະ ວິທີການລົງລາຍເຊັນເອເລັກໂຕຣນິກ ແມ່ນໃຫ້ປະຕິບັດຕາມຄຳແນະນຳຊົ່ວຄາວ ຂອງກະຊວງການເງິນ ສະບັບເລກທີ 3480/ກງ, ລົງວັນທີ 07 ພະຈິກ 2022, ວ່າດ້ວຍການນຳໃຊ້ລາຍເຊັນເອເລັກໂຕຣນິກເຂົ້າໃນລະບົບຄຸ້ມຄອງລາຍຮັບງົບປະມານແຫ່ງລັດ;
4. ການຊຳລະຄ່າພາສີ-ອາກອນ ແລະ ພັນທະອື່ນ ແມ່ນໃຫ້ຊຳລະຜ່ານລະບົບການຊຳລະແບບລວມສູນຂອງກະຊວງການເງິນ Finlink ທີ່ສາມາດຊຳລະຜ່ານບັນດາທະນາຄານທຸລະກິດທີ່ຂຶ້ນກັບ;
5. ມອບໃຫ້ພາສີປະຈຳແຂວງ, ນະຄອນຫຼວງວຽງຈັນ ຊີ້ນຳດ່ານພາສີສາກົນ ແລະ ຫ້ອງການພາສີ ທີ່ຂຶ້ນກັບ, ເພື່ອຮັບຜິດຊອບໃນການຈັດຕັ້ງປະຕິບັດ, ຄຸ້ມຄອງ ແລະ ນຳໃຊ້ ລະບົບ NSWA⁺, ພ້ອມທັງປະສານສົມທົບກັບຄະນະຮັບຜິດຊອບຂອງກົມພາສີ ແລະ ຂະແໜງການກ່ຽວຂ້ອງ ເພື່ອພ້ອມກັນຈັດຕັ້ງປະຕິບັດ. ພ້ອມນັ້ນ ກໍໃຫ້ອອກແຈ້ງການ ຫຼື ເຜີຍແຜ່ ໃຫ້ແກ່ຜູ້ປະກອບການ ເພື່ອຮັບຊາບ ແລະ ດຳເນີນການຂຶ້ນທະບຽນນຳໃຊ້ລາຍເຊັນເອເລັກໂຕຣນິກ ໂດຍໃຫ້ຄວາມຮ່ວມມືໃນການຈັດຕັ້ງປະຕິບັດ;
6. ມອບໃຫ້ ກົມພາສີ, ກົມເຕັກໂນໂລຊີຂໍ້ມູນຂ່າວສານການເງິນ, ຄັງເງິນແຫ່ງຊາດ, ບັນດາທະນາຄານທີ່ໃຫ້ບໍລິການຊຳລະສະສາງ ແລະ ທຸກພາກສ່ວນທີ່ກ່ຽວຂ້ອງ ຈົ່ງຮັບຮູ້ ແລະ ພ້ອມກັນຈັດຕັ້ງປະຕິບັດໃຫ້ສຳເລັດເປັນຢ່າງດີ;
7. ໃນການຈັດຕັ້ງປະຕິບັດຕົວຈິງ ຫາກພົບຄວາມຫຍຸ້ງຍາກ ຫຼື ບັນຫາ, ໃຫ້ກົມພາສີສັງລວມລາຍງານຂໍທິດຊີ້ນຳຈາກກະຊວງການເງິນ ເພື່ອດຳເນີນການ ແກ້ໄຂທັນສະພາບ.

ດັ່ງນັ້ນ, ຈຶ່ງແຈ້ງມາຍັງບັນດາທ່ານ ແລະ ພາກສ່ວນກ່ຽວຂ້ອງ ເພື່ອຊາບ ແລະ ພ້ອມກັນຈັດຕັ້ງປະຕິບັດຢ່າງເຂັ້ມງວດ.

ກະຊວງການເງິນ ຫ້ອງການ

**ຫົວໜ້າຫ້ອງການ**

**ສົມຈິດ ຄຳມຸງຄຸນ**

<u>ບ່ອນນຳສົ່ງ:</u>

- ລັດຖະມົນຕີກະຊວງການເງິນ — 01 ສະບັບ ເພື່ອຊາບ;
- ກົມພາສີ — 01 ສະບັບ ເພື່ອຮັບຊາບ ແລະ ຈັດຕັ້ງປະຕິບັດ;
- ກົມເຕັກໂນໂລຊີຂໍ້ມູນຂ່າວສານການເງິນ — 01 ສະບັບ ເພື່ອຮັບຊາບ ແລະ ປະສານສົມທົບ;
- ຄັງເງິນແຫ່ງຊາດ — 01 ສະບັບ ເພື່ອຊາບ ແລະ ປະສານສົມທົບ;
- ຫ້ອງການພາສີປະຈຳແຂວງ, ນະຄອນຫຼວງວຽງຈັນ — 01 ສະບັບ ເພື່ອຈັດຕັ້ງປະຕິບັດ;
- ພະແນກອ້ອມຂ້າງກົມພາສີ — 01 ສະບັບ ເພື່ອຮັບຊາບ ແລະ ຈັດຕັ້ງປະຕິບັດ.
- ທະນາຄານທີດຳເນີນການຊຳລະສະສາງ — 01 ສະບັບ ເພື່ອຮັບຊາບ ແລະ ຈັດຕັ້ງປະຕິບັດ.